ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------------------------------------

ສຳນັກງານນາຍົກລັດຖະມົນຕີ
ຄະນະຊີ້ນຳພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ແຫ່ງຊາດ( ຄພທຊ)
ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

ເລກທີ :1497/ທລຍ.11

## ຂໍ້ຕົກລົງວ່າດ້ວຍການສ້າງກົນໄກການປະສານງານ ແລະ ການຮ່ວມມື ລະຫ່ວາງ ກອງທຶນຫລຸດຜ່ອນຄວາມທຸກຍາກ(ທລຍ) ກັບ ກະຊວງອຸດສາຫະກຳແລະການຄ້າ(ອຄ)

ກະຊວງອຸດສາຫະກຳ ແລະ ການຄ້າ (ກຄ) ແລະ ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ໄດ້ຕົກລົງສ້າງກົນໄກການຮ່ວມມື ແລະ ປະສານງານ ແນໃສ່ຮັບປະກັນການມີສ່ວນຮ່ວມຂອງວຽກງານອຸດສາຫະກຳ ແລະການຄ້າ ເຂົ້າໃນການແກ້ໄຂຄວາມທຸກຍາກ ໂດຍສະເພາະໃນເຂດຫ່າງໄກສອກຫລີກ

ກະຊວງອຸດສາຫະກຳ ແລະ ການຄ້າ ມີໜ້າທີ່ສົ່ງເສີມວຽກງານອຸດສະຫະກຳ ແລະ ການຄ້າໃຫ້ກາຍເປັນກຳລັງແຮງຜັກດັນການພັດທະນາໃນເຂດຊົນນະບົດຫ່າງໄກສອກຫລີກ ເພື່ອໃຫ້ຫລຸດພົ້ນອອກຈາກຄວາມທຸກຍາກ.ທລຍ ມີບົດບາດໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນເຂດຫ່າງໄກສອກຫລີກໂດຍໃຫ້ການສະໜັບສະໜູນພື້ນຖານໂຄງລ່າງບໍລິການ ແລະ ສັງຄົມ ໃນກຸ່ມບ້ານທີ່ທຸກຍາກ ເຊັ່ນ: ສ້າງທາງຊົນນະບົດ, ສາທາລະນະສຸກ, ສຶກສາ, ຊົນລະປະທານ ແລະ ນ້ຳສະອາດ ໂດຍສະເພາະໃນຂັ້ນກຸ່ມບ້ານທີ່ທຸກຍາກ, ໃນຮູບແບບຊຸມຊົນເປັນຜູ້ຄັດເລືອກບຸລິມະສິດ.ໃນເວລາດຽວກັນນັ້ນ, ທລຍ ຍັງໄດ້ເຂົ້າຮ່ວມການແກ້ໄຂຜົນກະທົບ ຈາກພະຍຸເກດສະໜາຢູ່ພາກໄຕ້ຂອງປະເທດລາວ, ໄດ້ຈັດຕັ້ງປະຕິບັດໂຄງການທົດລອງ ກ່ຽວກັບການລະດົມໃຫ້ຊຸມຊົນພັດທະນາດ້ານການປັບປຸງຊີວິດການເປັນຢູ່ ແລະ ສະຫວັດດີການໃຫ້ດີຂຶ້ນ.ໃນປີ 2010 ລັດຖະບານໄດ້ຕັດສິນໃຈໃຫ້ ທລຍ ເຮັດວຽກງານພັດທະນາຊົນນະບົດ / ໂຄງການລຶບລ້າງຄວາມທຸກຍາກ.

ຈຸດປະສົງຂອງການຕົກລົງໃນຄັ້ງນີ້ ແມ່ນເພື່ອກະກຽມພື້ນຖານຊຸກຍູ້ໃຫ້ແກ່ການຮ່ວມມື ແລະ ປະສານງານລະຫ່ວາງກະຊວງ ອຄ ກັບ ທລຍ ໃນຮູບແບບປັບປຸງຊີວິດການເປັນຢູ່ໃນເຂດຊົນນະບົດ ດ້ວຍການຮ່ວມມືນຳກັນໃນກິດຈະກຳຕ່າງໆບ່ອນທີ່ມີຄວາມອາດສາມາດ ເປັນໄປໄດ້. ຕາມຄວາມເປັນຈິງແລ້ວ, ໂດຍສະເພາະແມ່ນທາງຊົນນະບົດແລະຊົນລະປະທານຊຶ່ງເປັນພື້ນຖານໂຄງລ່າງຊົນນະບົດທີ່ເອື້ອອຳນວຍໃຫ້ແກ່ການຜະລິດເປັນສິນຄ້າທີ່ຕິດຈອດກັບຕະຫລາດແນໃສ່ຫັນປ່ຽນການຜະລິດແບບທຳມະຊາດໄປສູ່ການຜະລິດ ແບບອຸດສາຫະກຳ ແລະ ເປັນສິນຄ້າ.

**ຈຸດເລີ່ມຕົ້ນຂອງການຮ່ວມມືລະຫ່ວາງ ກະຊວງອຸດສາຫະກຳ ແລະ ການຄ້າ ກັບ ທລຍ ມີຄືດັ່ງລຸ່ມນີ້:**

1. ເພື່ອຮັບປະກັນໃຫ້ແກ່ການຮ່ວມມື ແລະ ການປະສານງານໃນຂັ້ນສູນກາງດຳເນີນໄປດ້ວຍດີ, ກະຊວງອຸດສະຫະກຳ ແລະ ການຄ້າ ແລະ ທລຍ ຈະຕ້ອງໄດ້ຈັດ ກອງປະຊຸມຢ່າງເປັນປົກກະຕິເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ບັນຫາອື່ນໆທີ່ສົນໃຈ, ໂດຍສະເພາະແມ່ນໂຄງການທົດລອງກ່ຽວກັບການປັບປຸງຊີວິດການເປັນຢູ່ໃນຊຸມຊົນໂດຍຜ່ານການຜະລິດເປັນສິນຄ້າ ແລະ ໂພສະນາການທີ່ມີຄວາມສຳຄັນ, ຊຶ່ງກໍ່ເປັນວຽກບຸລິມະສິດຂອງກະຊວງ ອຄ ແລະ ທລຍ ໃນເຂດຫ່າງໄກສອກຫລີກ.

2. ເພື່ອເຮັດການພົວພັນລະຫ່ວາງ ກະຊວງ ອຄ ກັບ ທລຍ ເປັນປົກກະຕິ, ກະຊວງ ອຄ ຈະຕ້ອງໄດ້ແຕ່ງຕັ້ງຜູ້ປະສານງານ ກັບ ທລຍ ເພື່ອເປັນໃຈກາງໃນການຕິດຕໍ່ພົວພັນກາຍເປັນບາດກ້າວທຳອິດຂອງການຮ່ວມມືນຳກັນ. ທລຍ ຈະສະໜອງຂໍ້ມູນ ກ່ຽວກັບການວາງແຜນຂອງກຸ່ມບ້ານ ແລະ ກະຊວງ ອຄ ຈະເປັນຜູ້ລິເລີ້ມພັດທະນາໃນວຽກງານດັ່ງກ່າວ.

3. ກະຊວງ ອຄ ແລະ ທລຍ ສາມາດຮຽກປະຊຸມຂື້ນໃນເມື່ອມີຄວາມຈຳເປັນໃນການສົ່ງເສີມການຄ້າຂາຍ ໂດຍສະເພາະໃນ ຂັ້ນກຸ່ມບ້ານໃນບ່ອນທີ່ມີພື້ນຖານໂຄງລ່າງເຂົ້າເຖິງ ແລະ ມີທ່າແຮງສາມາດດຳເນີນການໄດ້ໄວ.

4. ກະຊວງ ອຄ ຈະຊຸກຍູ້ໃຫ້ພະນັກງານຂອງຕົນໃນແຕ່ລະທ້ອງຖິ່ນຢູ່ຂັ້ນແຂວງ ແລະ ເມືອງ ເຂົ້າຮ່ວມກິດຈະກຳຂອງກຸ່ມ ບ້ານ ແລະ ກອງປະຊຸມຂັ້ນເມືອງຈັດຂື້ນໂດຍ ທລຍ ເພື່ອນຳເອົາແນວຄວາມຄິດ ແລະ ຂໍ້ສະເໜີປະກອບເຂົ້າໃນການຮ່ວມມື ເພື່ອສ້າງສາຍພົວພັນ. ຂອບເຂດການຮ່ວມມື ແລະ ການປະສານງານ ຈະຈັດເປັນລະບົບ ທັງກວມເອົາວຽກງານຝຶກອົບຮົມ ໃຫ້ແກ່ ຊຸມຊົນໃນແຕ່ລະດ້ານເຊັ່ນ: ການຕະຫລາດ, ການປຸງແຕ່ງອາຫານ, ຫັດຖະກຳຈັກສານ ແລະ ອື່ນໆ.

5. ກະຊວງ ອຄ ກໍ່ແມ່ນສະມາຊິກສະພາຂອງ ຄພທຊ, ຈະໄດ້ເຂົ້າຮ່ວມໃນທຸກໆກອງປະຊຸມທີ່ ຄພທຊ ຈັດຂື້ນໂດຍສະ ເພາະວຽກງານການຮ່ວມມື ແລະ ການປະສານງານກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.

6. ທລຍ ຈະລາຍງານຄວາມຄືບໜ້າໃຫ້ ກະຊວງ ອຄ ກ່ຽວກັບງົບປະມານທີ່ຈັດສັນໃຫ້ແຕ່ລະກຸ່ມບ້ານ ບົນພື້ນຖານການ ແລກປ່ຽນຂໍ້ມູນກັບກະຊວງ ອຄ ເຊັ່ນ: ພື້ນທີ່ໆມີທ່າແຮງດ້ານການຜະລິດເປັນສິນຄ້າ, ສະຖານທີ່ແລກປ່ຽນສິນຄ້າ, ສູນການ ຄ້າ, ສົ່ງເສີມການຄ້າຂາຍຂະໜາດນ້ອຍ, ສ້າງບຸກຄະລະກອນ, ສະໜອງຂໍ້ມູນຂ່າວສານກ່ຽວກັບການຜະລິດ ທີ່ສາມາດຂາຍ ໄດ້ເຊັ່ນ: ເຄື່ອງຫັດຖະກຳ, ຜົນຜະລິດກະສິກຳ, ຫັດຖະກຳຕຳແຜ່ນ ແລະ ອື່ນໆ

7. ທລຍ ຈະໄດ້ເຊີນພະແນກອຸດສາຫະກຳແລະການຄ້າແຂວງ,ຫ້ອງການ ອຄ ເມືອງ ເຂົ້າຮ່ວມໃນທຸກກອງປະຊຸມວາງ ແຜນຂັ້ນກຸ່ມບ້ານ ເພື່ອສະເໜີ ແນວຄວາມຄິດ ແລະ ທ່າແຮງອື່ນໆ.

8. ໃນກໍລະນີທີ່ມີຄວາມຈຳເປັນ ທລຍ ສາມາດຈ່າຍອັດຕາເບັ້ຍລ້ຽງ, ຄ່າເດີນທາງໃຫ້ແກ່ ກະຊວງ ອຄ ເຂົ້າຮ່ວມກອງປະຊຸມ ວາງແຜນໃນຂັ້ນກຸ່ມບ້ານ ແລະ ອື່ນໆ

9. ກະຊວງ ອຄ ແລະ ທລຍ ມີໜ້າທີ່ລາຍງານໃຫ້ອຳນາດການປົກຄອງທ້ອງຖິ່ນ ກ່ຽວກັບການວາງແຜນຮ່ວມກັນ ແລະ ລາຍ ງານຄວາມຄືບໜ້າຂອງວຽກໃຫ້ແກ່ທີມງານກຸ່ມບ້ານຊາບ.

10. ລະບົບການລາຍງານແມ່ນອົງປະກອບທີ່ສຳຄັນຂອງຂໍ້ຕົກລົງສະບັບນີ້. ຂັ້ນສູນກາງຈະຕ້ອງໃຫ້ຮູ້ວ່າມີຫຍັງເກີດຂື້ນໃນ ຂັ້ນ ທ້ອງຖິ່ນ. ດ້ວຍເຫດຜົນດັ່ງກ່າວນີ້ ທລຍ ແລະ ຂະແໜງ ອຄ ຂັ້ນທ້ອງຖິ່ນຈະຕ້ອງລາຍງານວຽກຮ່ວມມືໃນທ້ອງຖິ່ນຂອງຕົນ ໃຫ້ແກ່ຂັ້ນເທິງຂອງຕົນຕາມສາຍຕັ້ງຢ່າງປົກກະຕິ.

ຂໍ້ຕົກລົງສະບັບນີ້ແມ່ນເປັນສະບັບທຳອິດແລະຈະໄດ້ກວດແກ້ແລະປັບປຸງ,ໃນເມື່ອມີຄວາມຕ້ອງການ. ຄພທຊ, ກະຊວງ ອຄ ແລະ ທລຍ ໄດ້ຕົກລົງກັນເພື່ອໃຫ້ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ເຮັດໃຫ້ການຮ່ວມມື ແລະ ປະສານງານໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງມີຄວາມຍືນຍົງແລະຕໍ່ເນື່ອງ.

ນະຄອນຫລວງວຽງຈັນ,ວັນທີ 1 ສິງຫາ 2011

ທ່ານ ບຸນມີ ມະນີວົງ
ຫົວໜ້າຫ້ອງການ ກະຊວງອຸດສາຫະກຳແລະການຄ້າ

ດຣ ບຸນກ້ວາງ ສຸວັນນະພັນ
ວ່າການຜູ້ອຳນວຍການ ບໍລິຫານ ທລຍ

**<u>ຮັບຮູ້ຈາກ</u>**

ທ່ານ ກອງແກ້ວ ວົງປະເສີດ
ຫົວໜ້າ ຫ້ອງການຄະນະຊີ້ນຳພັດທະນາຊົນນະບົດ
ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ